*"ຜູ້ບໍຣິການໂຄງການ **Supportive Housing** ເປັນການຊ່ວຍເຫລືອທີ່ຍິ່ງໃຫຍ່. ນາງໄດ້ຊ່ວຍໃຫ້ຂ້າພະເຈົ້າໄດ້ຜ່ານຜ່າ ແລະຕັ້ງຕົວຂ້າພະເຈົ້າເອງໃຫ້ກັບຄືນມາສູ່ຊຸມນຸມຊົນ. ລາວຕິດຕາມນຳຂ້າພະເຈົ້າອາທິດນຶ່ງເທື່ອນຶ່ງ ແລະ ພວກເຮົາໄດ້ເວົ້າລົມກັນເຣື່ອງຕ່າງໆທີ່ຂ້າພະເຈົ້າອາດຈະຕ້ອງການຄວາມຊ່ວຍເຫລືອນຳ.*

ດ້ວຍຄວາມຊ່ວຍເຫລືອ, ຂ້າພະເຈົ້າໄດ້ກາຍເປັນແມ່ຍິງອິສຣະເຂັ້ມແຂງສາມາດກັບຄືນໄປເຮັດວຽກໄດ້ ແລະ ມີເງິນສຳເຣັດໃຫມ່ອີກຢ່າງຊ້າໆ. ການບໍຣິການໄດ້ຊ່ວຍເຫລືອຂ້າພະເຈົ້າໃຫ້ເປັນຣະບຽບ ແລະ ຕັ້ງເປົ້າຫມາຍໄວ້."

~ ນາງແມຣີ

*ຜູ້ເຂົ້າຮ່ວມຂອງໂຄງການ **Supportive Housing***

ຂ້າພະເຈົ້າຈະໄດ້ຣາຍຣະອຽດ
ເພີ້ມເຕີມໄດ້ແນວໃດກ່ຽວກັບໂຄງການ
Supportive Housing?

ກະຣຸນາສົ່ງອີເມລ:
SupportiveHousing@dshs.wa.gov

ຫລື ໂທຫາເລກໂທຟຣີ:
1-844-704-6786

Washington State
Department of Social
& Health Services

Transforming lives

DSHS 22-1762 LA (3/18) Laotian

ໂຄງການ **Supportive Housing**

ການອູ້ມຊູເພື່ອຈະຊ່ວຍເຫລືອທ່ານໃຫ້ດຳຣົງຊີວິດຢ່າງເປັນເງິນສຳເຣັດຢູ່ໃນເຮືອນຂອງທ່ານເອງ.

ພະແນກບໍຣິຫານການ
ອູ້ມຊູຜູ້ອາວຸໂສ ແລະ ຣະຍະຍາວ

ໂຄງການ Supportive Housing

- ຊ່ວຍເຫລືອທ່ານຊອກຫາອາພັດເມັນທີ່ສາມາດຈ່າຍໄດ້ບ່ອນທີ່ທ່ານປາກຈະອາສັຍຢູ່.
- ຊ່ວຍເຫລືອທ່ານຍ້າຍເຂົ້າໄປຢູ່ໃນອາພັດເມັນຂອງທ່ານເອງ.
- ຊ່ວຍເຫລືອທ່ານຮັກສາບ່ອນຢູ່ອາສັຍໄວ້ໄດ້ໂດຍ:
  - ການອັ້ມຊູຈຸດເປົ້າຫມາຍຂອງທ່ານ.
  - ການຊ່ວຍເຫລືອທ່ານກໍສ້າງຄວາມຊຳນານເພື່ອຄວາມສຳເຣັດ.
  - ການຕິດຕາມທ່ານໃສ່ບ່ອນຊ່ວຍເຫລືອຕາມອຸມນຸມອິນທີ່ກ່ຽວພັນນຳຈຸດເປົ້າຫມາຍຂອງທ່ານ.
- ເອົາການເຂົ້າເຖິງພະນັກງານອັ້ມຊູຊຳນານສະເພາະ.
- ເປັນການບໍຣິການຕາມໃຈເລືອກເອົາ: ທ່ານເລືອກທີ່ຈະເຂົ້າຮ່ວມ.

ໂຄງການ Supportive Housing ແມ່ນຫຍັງ?

ທາງເລືອກເອົາບ່ອນຢູ່ອາສັຍ: ທ່ານເລືອກເອົາບໍຣິເວນຫມູ່ບ້ານຂອງທ່ານເອງ ແລະ ອາພັດເມັນທີ່ທ່ານປາກຈະອາສັຍຢູ່ໂດຍອີງຕາມການມີວ່າງໄວ້ໃຫ້.

ຂໍ້ບອກອຸບປະສັກ: ການອັ້ມຊູມີໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານກໍສ້າງຄວາມຊຳນານທີ່ຈະຊ່ວຍເຫລືອທ່ານໃຫ້ຮັກສາບ່ອນຢູ່ອາສັຍຂອງທ່ານເອົາໄວ້. ການເຂົ້າຮ່ວມບໍ່ໄດ້ເຊື່ອມຍົງກັນກັບການປິ່ນປົວຢູ່ຕາມຄລີນິກ, ການເລີກເຫລົ້າ, ຫລື ການບັງຄັບໃຈຕົນເອງ.

ທາງເລືອກເອົາການບໍຣິການ: ພວກເຮົາຈະເຮັດວຽກນຳທ່ານເພື່ອຈະຈັດຫາການບໍຣິການ ແລະ ການອັ້ມຊູເພື່ອຈະແກ້ໄຂຄວາມຕ້ອງການ ແລະ ຄວາມຂອບໃຈຂອງທ່ານ.

ການຜະສົມຜະສານເຂົ້າສັງຄົມ: ພວກເຮົາຈະຊ່ວຍເຫລືອທ່ານຮຽນຮູ້ເພີ້ມເຕີມ ແລະ ເຂົ້າຮ່ວມຢູ່ໃນອຸມນຸມອິນຂອງທ່ານ, ບໍ່ກ່ຽວກັບກິຈກັມຂອງມັນ, ວຽກງານ, ການປົກປັກຮັກສາ –ທ່ານຕັດສິນເອົາເອງ!

ການອັ້ມຊູຈາກພະນັກງານ: ທ່ານຈະມີການເຂົ້າເຖິງພະນັກງານຜູ້ທີ່ສາມາດຊ່ວຍເຫລືອແກ້ໄຂບັນຫາ ແລະ ໃຫ້ຄວາມອັ້ມຊູເພື່ອຄວາມສຳເຣັດ.

ຜົນສະທ້ອນ: ການບໍຣິການຮັບຮູ້ວ່າຜົນສະທ້ອນເກີດຂຶ້ນໄດ້ແລະ ພວກເຮົາຈະອັ້ມຊູທ່ານໄປຕະລອດຖ້າຫາກว່າ ແລະ ເມື່ອມັນເກີດຂຶ້ນ.

ຂ້າພະເຈົ້າມີເງື່ອນໄຂໄດ້ຮັບການບໍຣິການຂອງໂຄງການ ALTSA Supportive Housing ບໍ?

ໂຄງການ Supportive Housing ອາດຈະຊ່ວຍເຫລືອທ່ານໄດ້ຫລາຍຖ້າຫາກว່າທ່ານມີເງື່ອນໄຂໄດ້ຮັບການບໍຣິການຈາກຜະແນກບໍຣິຫານການອັ້ມຊູຜູ້ອາວຸໂສ ແລະ ຣະຍະຍາວ (ALTSA) ແລະ ຖ້າຫາກว່າອັນໃດອັນນຶ່ງຂອງສິ່ງຕໍ່ລົງໄປນີ້ເປັນຄວາມຈິງສຳລັບທ່ານ:

- ທ່ານອາສັຍຢູ່ໃນສະພາບແວດລ້ອມຢູ່ໃນສະຖາບັນປິ່ນປົວ, ລໍຖ້າຕຽງນອນໂຮງພະຍາບານໂຣກຈິດ, ຫລື ບໍ່ມີບ່ອນຢູ່ອາສັຍ.
- ທ່ານປາກຈະຢູ່ໂດຍຕົວທ່ານເອງ, ແຕ່ວ່າຕ້ອງການອັ້ມຊູຊ່ວຍເຫລືອບາງຢ່າງ.
- ສະພາບແວດລ້ອມບ່ອນຢູ່ອາສັຍ (ຊຶ່ນว່າເຮືອນຄອບຄົວຜູ້ໃຫຍ່) ຈະບໍ່ແມ່ນໃຊ້ການໄດ້ດີສະເມີສຳລັບທ່ານ.
- ທ່ານມີຄວາມຫຍຸ້ງຍາກນຳການຮັກສາຜູ້ເບິ່ງແຍງດູແລທີ່ສອດຄ່ອງກັນ.

ເງື່ອນໄຂຮັບເອົາຂອງ ALTSA ຈະຖືກພິຈາຣະນາເບິ່ງໂດຍ:

- ກົດຫມາຍຂອງການເງິນ (ຣາຍໄດ້ ແລະ ຊັບສິນຂອງທ່ານ), ແລະ
- ກົດຫມາຍຂອງຄວາມສາມາດຣັດວຽກໄດ້ (ຈຳນວນການຊ່ວຍເຫລືອທີ່ທ່ານຕ້ອງການສຳລັບກິຈກັມປະຈຳວັນຂອງທ່ານ).